ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ
ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ 083/ຈທວ.ກທຄວ

ນະຄອນຫຼວງວຽງຈັນ, ວັນທີ 19 ກຸມພາ 2020

ເຖິງ: - ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ
- ບໍລິສັດ ອາໂກຣແມັກ ຈຳກັດຜູ້ດຽວ
- ວິສາຫະກິດສ່ວນບຸກຄົນ ບ້ານວັດທະນະທຳ ແລະ ລີສອດສວນພູໄທ ທີລະ
- ໂຮງພີມ ດວງມາລາ ຈຳກັດຜູ້ດຽວ
- ບໍລິສັດ ເອແອລເອຟ ຈະເລີນຊັບ ຈຳກັດຜູ້ດຽວ

ເລື່ອງ: ແຈ້ງລົບລ້າງ ແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ, ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ແຈ້ງການການໂຈະການດຳເນີນທຸລະກິດຊົ່ວຄາວ ຫຼື ຖາວອນ ແລະ ການຖອນທະບຽນວິສາຫະກິດ, ເລກທີ 1720/ອຄ.ຄພນ, ລົງວັນທີ 09 ກັນຍາ 2011;
- ອີງຕາມ ແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ສະບັບເລກທີ 062/ຈທວ.ກທຄວ, ລົງວັນທີ 10 ກຸມພາ 2020.

ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງໃຫ້ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ ຊາບວ່າ:

1. ຍົກເລີກຜົນຂອງການແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ເນື່ອງຈາກວິສາຫະກິດໄດ້ປະຕິບັດບັນຫາທີ່ລະເມີດຂອງຕົນສຳເລັດ ຕາມແຈ້ງການ ສະບັບເລກທີ 062/ຈທວ.ກທຄວ, ລົງວັນທີ 10 ກຸມພາ 2020 ຈຳນວນ 4 ວິສາຫະກິດທີ່ມີລາຍຊື່ ດັ່ງນີ້:
   1.1 ບໍລິສັດ ອາໂກຣແມັກ ຈຳກັດຜູ້ດຽວ, ໃບທະບຽນວິສາຫະກິດ ສະບັບເລກທີ 0413/ຈທວ, ລົງວັນທີ 26/03/2019.
   1.2 ວິສາຫະກິດສ່ວນບຸກຄົນ ບ້ານວັດທະນະທຳ ແລະ ລີສອດສວນພູໄທ ທີລະ, ໃບທະບຽນວິສາຫະກິດ ສະບັບເລກທີ 0409, ລົງວັນທີ 26/03/2019.
   1.3 ໂຮງພີມ ດວງມາ ຈຳກັດຜູ້ດຽວ, ໃບທະບຽວິສາຫະກິດ ສະບັບເລກທີ 0531/ຈທວ, ລົງວັນທີ 8/04/2019.
   1.4 ບໍລິສັດ ເອແອລເອຟ ຈະເລີນຊັບ ຈຳກັດຜູ້ດຽວ, ໃບທະບຽນວິສາຫະກິດ ສະບັບເລກທີ 0468/ຈທວ, ລົງວັນທີ 29/03/2019.

2. ຜົນຂອງການຍົກເລີກ (ຕາມຂໍ້ 1 ເທິງນີ້) ເຮັດໃຫ້ວິສາຫະກິດດັ່ງກ່າວ ສາມາດສືບຕໍ່ເຄື່ອນໄຫວທຸລະກິດໄດ້ ໂດຍໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ ນັບແຕ່ວັນທີ່ອອກແຈ້ງການສະບັບນີ້ເປັນຕົ້ນໄປ;

3. ສໍາລັບບັນດາຫົວໜ່ວຍວິສາຫະກິດອື່ນ ທີ່ຍັງມີລາຍຊື່ຕາມການແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ສະບັບເລກທີ 062/ຈທວ.ກທຄວ, ລົງວັນທີ 10 ກຸມພາ 2020 ທີ່ຍັງບໍ່ເຂົ້າໄປພົວພັນເຈົ້າໜ້າທີ່ທະບຽນວິສາຫະກິດ ກົມ ທຄວ ແມ່ນຍັງມີຜົນຖືກໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ຕາມເນື້ອໃນດັ່ງກ່າວທຸກປະການ.

ແຈ້ງມາເພື່ອຊາບ ແລະ ປະຕິບັດ.

ເຈົ້າໜ້າທີ່ທະບຽນວິສາຫະກິດ

ກະຊວງອຸດສາຫະກໍາ ແລະ ການຄ້າ
ເຈົ້າໜ້າທີ່
ທະບຽນວິສາຫະກິດ
ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ທ. ຈຽງຄໍາ ທອງປະເສີດ
Mrs. Chiengkham THONGPASEUTH

ບ່ອນສົ່ງ:

| | | |
|---|---|---|
| - | ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ | 1 ສະບັບ; |
| - | ກົມສ່ວຍສາອາກອນ, ກະຊວງການເງິນ | 1 ສະບັບ; |
| - | ກົມພາສີ, ກະຊວງການເງິນ | 1 ສະບັບ; |
| - | ກົມອຸດສາຫະກໍາ ແລະ ຫັດຖະກໍາ | 1 ສະບັບ; |
| - | ກົມການຄ້າພາຍໃນ | 1 ສະບັບ; |
| - | ກົມການນໍາເຂົ້າ ແລະ ສົ່ງອອກ | 1 ສະບັບ; |
| - | ຫ້ອງວ່າການປົກຄອງນະຄອນຫຼວງວຽງຈັນ | 1 ສະບັບ; |
| - | ພະແນກ ອຸດສາຫະກໍາ ແລະການຄ້າ ນວ | 1 ສະບັບ; |
| - | ສ່ວຍສາອາກອນປະຈໍານະຄອນຫຼວງ | 1 ສະບັບ; |
| - | ສະພາການຄ້າແລະອຸດສາຫະກໍາແຫ່ງຊາດ | 1 ສະບັບ; |
| - | ວິສາຫະກິດທີ່ກ່ຽວຂ້ອງ | 1 ສະບັບ; |